ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ກົມຄຸ້ມຄອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ

ເລກທີ 517 /ກຄສບ
ນະຄອນຫຼວງວຽງຈັນ, ວັນທີ 25 ສິງຫາ 2023

# ແຈ້ງການ

ເຖິງ: ຜູ້ອໍານວຍການ ບໍລິສັດເຊົ່າສິນເຊື່ອ ໃນຂອບເຂດທົ່ວປະເທດ.
ເລື່ອງ: ການບໍ່ອະນຸຍາດໃຫ້ດໍາເນີນທຸລະກໍາເປັນເງິນຕາຕ່າງປະເທດ.

- ອີງຕາມ ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ (ສະບັບປັບປຸງ) ສະບັບເລກທີ 15/ສພຊ, ລົງວັນທີ 07 ກໍລະກົດ 2022;
- ອີງຕາມ ດໍາລັດວ່າດ້ວຍທຸລະກິດເຊົ່າສິນເຊື່ອ (ສະບັບປັບປຸງ) ສະບັບເລກທີ 471/ລບ, ລົງວັນທີ 02 ກໍລະກົດ 2021;
- ອີງຕາມ ຂໍ້ຕົກລົງວ່າດ້ວຍສັນຍາເຊົ່າສິນເຊື່ອ ສະບັບເລກທີ 265/ທຫລ, ລົງວັນທີ 20 ມີນາ 2023;
- ອີງຕາມ ແຈ້ງການຂອງກົມຄຸ້ມຄອງສະຖາບັນການເງິນ (ກົມຄຸ້ມຄອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ) ສະບັບເລກທີ 57/ກຄສງ, ລົງວັນທີ 22 ກຸມພາ 2019.

ກົມຄຸ້ມຄອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ (ກຄສບ), ທະນາຄານແຫ່ງ ສປປ ລາວ ຂໍແຈ້ງມາຍັງທ່ານຊາບ ກ່ຽວກັບການຄຸ້ມຄອງກວດກາໃນໄລຍະຜ່ານມາ ເຫັນວ່າ ການເຄື່ອນໄຫວທຸລະກໍາຂອງບໍລິສັດເຊົ່າສິນເຊື່ອບາງແຫ່ງ ໄດ້ດໍາເນີນເປັນເງິນຕາຕ່າງປະເທດ ຊຶ່ງບໍ່ສອດຄ່ອງກັບກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ຂໍ້ຕົກລົງວ່າດ້ວຍສັນຍາເຊົ່າສິນເຊື່ອ. ສະນັ້ນ, ກຄສບ ຈຶ່ງແຈ້ງມາຍັງທ່ານ ໃຫ້ເຂັ້ມງວດໃນການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກໍາກ່ຽວຂ້ອງ ໂດຍທຸກການເຄື່ອນໄຫວ ແລະ ທຸລະກໍາຂອງບໍລິສັດເຊົ່າສິນເຊື່ອ ເປັນຕົ້ນ ການກໍານົດມູນຄ່າຊັບສິນເຊົ່າ, ຄ່າງວດ, ຄ່າປັບໃໝ ແລະ ຄ່າອື່ນໆ ແມ່ນບໍ່ອະນຸຍາດໃຫ້ດໍາເນີນເປັນເງິນຕາຕ່າງປະເທດ. ກໍລະນີ ບໍລິສັດເຊົ່າສິນເຊື່ອ ລະເມີດແຈ້ງການສະບັບນີ້ ຈະຖືກດໍາເນີນມາດຕະການ ຕາມທີ່ກໍານົດໄວ້ໃນກົດໝາຍ ແລະ ລະບຽບການກ່ຽວຂ້ອງ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ຫົວໜ້າກົມ

ທະນາຄານ ແຫ່ງ ສປປ ລາວ
ກົມຄຸ້ມຄອງສະຖາບັນການເງິນ

ພູຂີງ ຈັນທະຈັກ

ປະສານງານ: ພະແນກນະໂຍບາຍ ແລະ ລະບຽບການ
ທ່ານ ນ. ຄໍາເບົ້າ ສຸວັລະວົງ 020 2821 5598